ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 27 ມີນາ 2004 ( 3-27-2004)

---

## ພຣະເຢຊູ: ຊົງເປັນມະຫາປະໂຣຫິດ

<u>ຂໍ້ພຣະຄັມພີໃນບົດຮຽນ:</u> ມາຣະໂກ 16:1-7; ເຮັບເຣີ 7:23-28; 9:11-14

<u>ພຣະຄັມພີແຫ່ງຄວາມຈິງ:</u> ພຣະເຢຊູຊົງມີຊັຍຕໍ່ຄວາມມໍຣະນາດ້ວຍການຄືນພຣະຊົນແລະປະຈຸບັນນີ້ພຣະອົງຊົງເປັນມະຫາປະໂລຫິດຂອງຜູ້ທີ່ເຊື່ອໃນສວັນທີ່ພຣະພັກຂອງພຣະຜູ້ເປັນເຈົ້າ.

<u>ຜົນສະທ້ອນຕໍ່ຊີວິດ:</u> ບົດຮຽນນີ້ຈະຊ່ອຍທ່ານໃຫ້ຮູ້ວ່າພຣະເຢຊູຊົງເປັນມະຫາປະໂລຫິດຂອງທ່ານ.

## ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າພຣະເຢຊູຊົງເປັນມະຫາປະໂຣຫິດຂອງຂ້າພະເຈົ້າ?

ຈຳເປັນແທ້ບໍທີ່ຈະໃຫ້ພຣະເຢຊູມາເປັນມະຫາປະໂລຫິດຂອງພວກເຮົາ? ບົດຮຽນນີ້ຈະຊ່ອຍທ່ານໃຫ້ເຂົ້າໃຈວ່າເປັນຫຍັງພຣະເຢຊູ, ອົງຊົງຄືນມາຈາກຄວາມມໍຣະນາ, ເປັນມະຫາປະໂລຫິດອົງດຽວເທົ່ານັ້ນທີ່ພຣະເຈົ້າຊົງຮັບຮູ້.

## ສຶກສາພຣະຄັມພີ

1. <u>ພຣະເຈົ້າຜູ້ຊົງພຣະຊົນຢູ່</u> (ມາຣະໂກ 6:1-7)

ທ່ານເຄີຍຮັບວຽກອັນໃດມາບໍ່ ແລ້ວຮູ້ສຶກຕາມຫລັງວ່າວຽກທີ່ຮັບມານັ້ນຍາກກວ່າທ່ານໄດ້ຄິດໄວ້? ເຫດການນີ້ອາດຈະບໍ່ຕ່າງຫຍັງເລີຍກັບພວກຜູ້ຍິງທີ່ເດີນທາງມາເພື່ອຈະເອົາເຄື່ອງຫອມໄປທົດສົງພຣະສົບຂອງພຣະເຢຊູໃນເວລາຮຸ່ງເຊົ້າໃນວັນຕົ້ນສັປດາ.

ໃນຂນະທີ່ພວກເຂົາກຳລັງເດີນທາງໄປບ່ອນຝັງພຣະສົບຂອງພຣະອົງ ພວກເຂົາຄິດຂອດໄດ້ແລ້ວເລີຍຖາມກັນວ່າ, "ໃຜຫນໍຈະກິ້ງກ້ອນຫີນນັ້ນອອກຈາກປາກອຸບໂມງໃຫ້ເຮົາ?" ພວກເຂົາເວົ້າກັນເຖິງເຣື່ອງບັນຫາໃຫຽ່ທີ່ພວກເຂົາຈະປະເຊີນ. ໃນບໍ່ທັນໃດນັ້ນ ພວກເຂົາກໍພົບວ່າພຣະເຈົ້າຊົງແກ້ບັນຫານັ້ນໄວ້ໃຫ້ພວກເຂົາກ່ອນແລ້ວ. ເມື່ອເຂົາເບິ່ງກໍເຫັນວ່າກ້ອນຫີນນັ້ນກິ້ງອອກແລ້ວ-ເພາະເປັນຫີນກ້ອນໃຫຽ່ເຕັມທີ. ພວກເຂົາເປັນຫ່ວງໃນສິ່ງທີ່ບໍ່ຈຳເປັນເລີຍ. ມີຊາຍຜູ້ອາວຸໂສຄົນນຶ່ງໄດ້ເລົ່າໃຫ້ຂ້າພະເຈົ້າຟັງວ່າ, "ເຈົ້າເຄີຍສັງເກດເບິ່ງບໍ່," ລາວໂຈະໄວ້ຄາວນຶ່ງແລ້ວເວົ້າຕໍ່ໄປວ່າ, "ສິ່ງທີ່ພວກເຮົາເປັນຫ່ວງຢ້ານວ່າມັນຈະເກີດຂຶ້ນນັ້ນ ຫລາຍເທື່ອມັນບໍ່ເກີດຂຶ້ນ, ແລະເຖິງແມ່ນວ່າມັນເກີດຂຶ້ນມັນກໍບໍ່ຮ້າຍແຮງເຖິງກັບວ່າເຮົາຄາດຄິດໄວ້ ແມ່ນບໍ່?" ພວກຜູ້ຍິງເຫລົ່ານັ້ນເປັນພຍານໃຫ້ໄດ້ວ່າຂໍ້ຄວາມທີ່ກ່າວມານັ້ນເປັນຄວາມຈິງ. ເມື່ອພວກເຮົາຄິດວ່າ ພວກເຮົາອາດຈະບໍ່ມີຄວາມສາມາດພຽງພໍກັບວຽກທີ່ພວກເຮົາເຮັດນັ້ນ ພວກເຮົາໄວ້ວາງໃຈກັບພຣະເຈົ້າວຽກນັ້ນກໍຈະລຸລ່ວງໄປໄດ້ດີ. ພວກເຂົາຫວັງວ່າຈະໄດ້ທົດສົງພຣະສົບຂອງພຣະເຢຊູ, ແຕ່ພຣະເຈົ້າຊົງໄດ້ປ່ຽນແຜນການຂອງພວກເຂົາກ່ອນແລ້ວ.

ທ່ານລອງຫລັບຕາເບິ່ງພາບພົດຕໍ່ໄປນີ້ວ່າຈະເປັນໄປໄດ້ບໍ່ ທ່ານກຳລັງເຂົ້າໄປໃນອຸບໂມງ ທ່ານຊອກຫາພຣະສົບຂອງພຣະເຢຊູ ແຕ່ທ່ານບໍ່ເຫັນພຣະສົບຂອງພຣະອົງ ແລະຕໍ່ມາທ່ານພົບວ່າພຣະອົງ ອົງທີ່ທ່ານຄິດວ່າວາຍພຣະຊົນນັ້ນຊົງມີພຣະຊົນຢູ່? ພວກຜູ້ຍິງກໍຢູ່ໃນສະພາບອັນດຽວກັນແລະພວກເຂົາເກີດຄວາມຢ້ານ. ເທວະດາຈຶ່ງໄດ້ລະງັບຄວາມຢ້ານຂອງພວກເຂົາໂດຍກ່າວຕໍ່ພວກເຂົາວ່າ ພຣະເຢຊູຊົງຄືນພຣະຊົນແລ້ວ ແລະພຣະອົງບໍ່ໄດ້ຊົງຢູ່ທີ່ນັ້ນ. ພຣະອົງໄດ້ສະເດັດໄປກ່ອນ ເພື່ອຈະພົບກັບພວກສາວົກແລະເປໂຕທີ່ແຂວງຄາລີເລ.

ພວກສາວົກຂອງພຣະອົງໄດ້ແຕກໜີ ຫລັງຈາກພຣະອົງຖືກຈັບ. ເປໂຕໄດ້ປະຕິເສດພຣະອົງສາມເທື່ອ ແລ້ວເສັຽໃຈຮ້ອງໄຫ້ດ້ວຍຄວາມຂົມຂື່ນ ຫລັງຈາກຮູ້ສຶກຕົວວ່າລາວໄດ້ປະຕິເສດພຣະອາຈານຂອງລາວ (ໃຫ້ເບິ່ງພຣະທັມມາຣະໂກ 14:50; 66-72). ເປັນເຣື່ອງລາວທີ່ໃຫ້ກຳລັງໃຈແກ່ພວກເຮົາບໍ່ແມ່ນບໍ ທີ່ຮູ້ວ່າພຣະອາຈານຂອງພວກເຮົາຈະບໍ່ປະຖິ້ມພວກເຮົາ ເຖິງແມ່ນວ່າ ເມື່ອພວກເຮົາໄດ້ພາດພັ້ງໄປກໍຕາມ?

໒. <u>ພຣະມະຫາປະໂຣຫິດອັນຕລອດໄປ</u> (ເຮັດເຣີ 7:23-28)

ໜ້າທີ່ຂອງປະໂຣຫິດນັ້ນແມ່ນເປັນຜູ້ແທນຂອງປະຊາຊົນຢູ່ຕໍ່ພຣະພັກຂອງພຣະເຈົ້າ ແລະເປັນຜູ້ແທນຂອງພຣະເຈົ້າຢູ່ຕໍ່ໜ້າປະຊາຊົນ. ພຣະທັມເຮັບເຣີໄດ້ຊີ້ໃຫ້ເຫັນວ່າ ປະໂຣຫິດທັງຫລາຍໄດ້ປະຕິບັດຕາມໜ້າທີ່ຂອງຕົນ ສືບຕຳແໜ່ງຕໍ່ກັນມາຫລາຍຄົນ. ພວກເຂົາມາຮັບຕຳແໜ່ງໜ້າທີ່ແລ້ວ ພວກເຂົາກໍປະຕິບັດຮັບໃຊ້ ຫລັງຈາກນັ້ນພວກເຂົາກໍເສັຽຊີວິດຈາກໂລກນີ້ໄປ ແລະປະໂຣຫິດຕົນອື່ນກໍມາຮັບໜ້າທີ່ນີ້ຕໍ່ໄປ.

ນັກນາຍົກຄົນນຶ່ງໄດ້ກ່າວເຖິງການມາຮັບໃຊ້ແລະການຈາກໄປຂອງສິດຍາພິບານໃນທີ່ປະຊຸມ. ໜ້າເສົ້າໃຈນັ້ນກໍຄືວ່າ ມີບາງໂບດສິດຍາພິບານຄົນໃດມາຢູ່ກໍຕາມ ຢູ່ໄດ້ບໍ່ນານກໍຈາກໄປ. ເມື່ອເປັນດັ່ງນັ້ນກໍຈະໄປກະທົບກະເທືອນເຣື່ອງການຮັບໃຊ້ຂອງໂບດ. ມີຫລາຍຄົນກໍບໍ່ສາມາດຈະສນັບສນູນຜູ້ນຳດ້ວຍຄວາມຮ້ອນຮົນ ເມື່ອພວກເຂົາຮູ້ສຶກວ່າຜູ້ນຳທີ່ມານັ້ນຈະບໍ່ຢູ່ນຳພວກເຂົາດົນນານ. ທຸກໆຄັ້ງທີ່ສິດຍາພິບານຈາກໄປໂບດນັ້ນຈະຕົກຢູ່ໃນສະພາບການຫັນປ່ຽນຢ່າງຫລວງຫລາຍ ບາງຄັ້ງກໍເປັນເຫດໃຫ້ເກີດບັນຫາໃນໂບດກໍໄດ້.

ເຖິງຢ່າງໃດກໍຕາມ ພຣະເຢຊູຊົງ ດຳຣົງຕຳແໜ່ງປະໂຣຫິດ...ຢູ່ເປັນນິດ. ຕຳແໜ່ງປະໂຣຫິດຂອງພຣະອົງນັ້ນພິເສດສຸດ. ບໍ່ມີຜູ້ໃດມາແທນພຣະອົງໄດ້. ພຣະອົງຊົງຄອບຄອງຕລອດໄປເປັນນິດ.

ພວກເຮົາສາມາດປິຕິຍິນດີທີ່ພຣະເຢຊູຊົງ ສາມາດເປັນນິດ ທີ່ຈະໂຜດເອົາຄົນທັງປວງທີ່ໄດ້ເຂົ້າມາຫາພຣະເຈົ້າໂດຍທາງພຣະອົງນັ້ນ. ພຣະອົງເປັນທີ່ເພິ່ງຂອງທຸກໆຄົນ. ພຣະອົງມີພະລັງອຳນາດທັງໝົດແລະພຣະອົງບໍ່ເຄີຍອ່ອນກຳລັງ. ຄວາມລອດພົ້ນຂອງພຣະອົງປະທານໃຫ້ຢູ່ສເມີ. ປະໂຣຫິດຂອງພວກເຮົາສາມາດຊ່ອຍພວກເຮົາໃຫ້ອອກຈາກຊີວິດທີ່ມີບາບ. ມີຫລາຍຄົນໄດ້ຮັບຄວາມລອດພົ້ນ ແລ້ວມີການປ່ຽນແປງໃນຊີວິດຂອງພວກເຂົາຢ່າງຫລວງຫລາຍ. ພຣະອົງໄດ້ຊ່ອຍພວກເຂົາອອກຈາກຊີວິດທີ່ເຕັມໄປດ້ວຍຄວາມບາບ ໃນເມື່ອພວກເຂົາຫາກກັບໃຈເຊົາເຮັດບາບ ແລະໄວ້ວາງໃຈເຊື່ອໃນພຣະອົງ.

ມີຫລາຍຄົນ ການກັບໃຈເຊື່ອໃນພຣະເຢຊູຂອງພວກເຂົານັ້ນອາດຈະບໍ່ໂລດໂຜນເໝືອນກັບຂອງບາງຄົນ. ພວກເຂົາເຕີບໃຫຍ່ໃນໂບດແລະໃນຄອບຄົວຄຣິສຕຽນ. ຄົນເຫລົ່ານີ້ບໍ່ຄວນຄິດໄປວ່າຄຳພຍານຂອງຕົນນັ້ນບໍ່ໂລດໂຜນເໝືອນກັບຄົນອື່ນ. ພວກເຂົາຄວນຈະມີຄວາມຍິນດີທີ່ພຣະອົງຊົງປົກປັກຮັກສາພວກເຂົາໃຫ້ເດີນຕາມຄຳສັ່ງສອນຂອງພຣະອົງຕລອດມາໃນຊີວິດຂອງພວກເຂົາ.

ພຣະເຢຊູຊົງເປັນຜູ້ສນັບສນູນພວກເຮົາ. ພຣະອົງຢູ່ຝ່າຍພວກເຮົາແລະພຣະອົງບໍ່ໄດ້ຕໍ່ສູ້ພວກເຮົາ. ໃນສມັຍທີ່ພຣະອົງເດີນໄປມາໃນໂລກມະນຸດນີ້ ພຣະອົງໄດ້ປະກາດແລະໄດ້ສະແດງໃຫ້ເຫັນຈາກການກະທຳຂອງພຣະອົງວ່າພຣະອົງສະເດັດມາເພື່ອຮັບໃຊ້ພວກເຮົາ. ພຣະອົງຍັງກະທຳຢູ່ໂດຍເປັນປະໂຣຫິດຂອງພວກເຮົາ. ໃນຖານະຂອງພວກເຮົາຜູ້ທີ່ເປັນຄົນບາບ ພວກເຮົາຕ້ອງການຜູ້ທີ່ບໍ່ມີບາບມາເປັນຜູ້ແທນຂອງພວກເຮົາໄປຢູ່ຕໍ່ພຣະພັກຂອງພຣະເຈົ້າອົງບໍຣິສຸດ. ຫລັງຈາກພຣະອົງສະເດັດໄປສູ່ສວັນແລ້ວ ການຮັບໃຊ້ຂອງພຣະອົງບໍ່ໄດ້ຢຸດຢູ່ທີ່ນັ້ນ. ເພາະວ່າພຣະອົງຊົງພຣະຊົນຢູ່ເປັນນິດ ເພື່ອຊ່ອຍທູນຂໍພຣະກະຣຸນາໃຫ້ຄົນເຫລົ່ານັ້ນ ຄືຜູ້ທີ່ມີຄວາມສັມພັນກັບພຣະອົງ. ພຣະອົງຊົງເປັນຜູ້ແທນຂອງພວກເຮົາໃນຖານະເປັນເພື່ອນຢູ່ທີ່ພຣະພັກຂອງພຣະເຈົ້າ.

ໃນໂລກມະນຸດນີ້ ປະໂຣຫິດຕົນໃຫຍ່ອື່ນໆ ກ່ອນອື່ນຈະຕ້ອງຖວາຍເຄື່ອງບູຊາສຳລັບຄວາມຜິດບາບຕົນເອງເສັຽກ່ອນ ຫລັງຈາກນັ້ນຈຶ່ງຖວາຍສຳລັບຄວາມຜິດບາບຂອງ ພົລເມືອງ. ພຣະເຢຊູຜູ້ຊົງເປັນມະຫາປະໂຣຫິດຂອງພວກເຮົາ ພຣະອົງບໍ່ເຄີຍຖວາຍສຳລັບຄວາມຜິດບາບຂອງພຣະອົງຈັກເທື່ອ ເພາະວ່າພຣະອົງຊົງເປັນ ຜູ້ບໍຣິສຸດປາສຈາກຜິດຫລືສິ່ງຊົ່ວມົວໝອງ ແຍກຈາກຄົນບາບທັງປວງ ຊົງປະທັບຢູ່ເໜືອມະຫາສວັນ. ພຣະອົງຊົງຖວາຍຊີວິດຂອງ

ພຣະອົງກ່ອນແລ້ວເພື່ອຄວາມຜິດບາບຂອງພວກເຮົາ. ມີແຕ່ເຄື່ອງຖວາຍຂອງພຣະອົງເທົ່ານັ້ນທີ່ພຣະເຈົ້າຊົງຮັບເອົາເພື່ອຄວາມຜິດບາບຂອງພວກເຮົາ. ຝ່າຍ ພຣະບັນຍັດ ຮັບຮອງ ມະນຸດ ໃຫ້ເປັນປະໂຣຫິດ. ແຕ່ພຣະເຈົ້າຊົງຮັບຮອງພຣະເຢຊູໃຫ້ເປັນປະໂຣຫິດຂອງພວກເຮົາດ້ວຍ ຄຳສາບານ ຂອງພຣະອົງ (ໃຫ້ເບິ່ງພຣະທັມເພັງສັຣເສີນ 110).ປະໂຣຫິດຄົນໃດທີ່ທ່ານຕ້ອງການ?

3. <u>ພຣະຜູ້ຊົງໂຜດໃຫ້ພົ້ນອັມມະຕະ</u> (ເຮັບເຣີ 9:11-14)

ພຣະເຈົ້າຊົງບໍຣິສຸດ. ພວກເຮົາບໍ່ເປັນຢ່າງນັ້ນ. ຄວາມບາບໄດ້ແຍກພວກເຮົາຈາກພຣະອົງ ແຕ່ວ່າພວກເຮົາຍັງຕ້ອງການຄວາມສັມພັນກັບພຣະອົງ. ປາສຈາກພຣະອົງແລ້ວ ພວກເຮົາບໍ່ມີຄວາມຫວັງອັນໃດເລີຍໃນຊີວິດຊຶ່ງເປັນຊີວິດທີ່ບໍ່ມີຈຸດປະສົງແລະບໍ່ມີຄວາມໝາຍ. ນອກເໜືອໄປກວ່ານັ້ນອີກ ປາສຈາກພຣະອົງແລ້ວພວກເຮົາບໍ່ມີພາກສ່ວນອັນໃດເລີຍໃນຊີວິດໜ້າ ຄືຫລັງຈາກຊີວິດນີ້.

ເພາະວ່າຄວາມບາບຂອງພວກເຮົາ ພວກເຮົາບໍ່ສາມາດເຂົ້າໃກ້ພຣະເຈົ້າອົງທ່ຽງທັມແລະບໍຣິສຸດ. ຄວາມບາບບໍ່ເຄີຍນຳຜົນດີອັນໃດມາໃຫ້ເລີຍ. ມັນເຮັດໃຫ້ຄວາມສັມພັນລະຫວ່າງພຣະເຈົ້າກັບພວກເຮົາຂາດກັນຢູ່ເລື້ອຍ. ຄວາມບາບນຳພວກເຮົາລົງໄປສູ່ຄວາມຫລົ້ມຈົມ ມັນລັກເອົາຊີວິດອັນຄົບບໍຣິບູນຈາກພວກເຮົາໄປ. ເຖິງຢ່າງໃດກໍຕາມຂ່າວດີຍັງມີຢູ່ ພຣະເຢຊູຜູ້ຊົງເປັນ ພຣະຄຣິດໄດ້ສະເດັດມາເປັນມະຫາປະໂຣຫິດສຳລັບສິ່ງປະເສີດຊຶ່ງມາເຖິງແລ້ວ. ພຣະເຢຊູນຳສິ່ງປະເສີດຊຶ່ງມາເຖິງນີ້ຢ່າງໃດ? ໃນສຳນັກອັນໃຫຍ່ແລະປະເສີດກວ່າແຕ່ກ່ອນ ທີ່ບໍ່ໄດ້ສ້າງຂຶ້ນດ້ວຍມືມະນຸດ (ຄືບໍ່ແມ່ນສິ່ງຂອງທີ່ສ້າງຂຶ້ນໃນໂລກນີ້). ພຣະອົງໄດ້ສະເດັດເຂົ້າໄປໃນສຖານທີ່ສັກສິດທີ່ສຸດ...ແຕ່ຊົງນຳພຣະໂລຫິດຂອງພຣະອົງເອງເຂົ້າໄປ ແລະຊົງສຳເຣັດການໄຖ່ບາບຕລອດໄປ.

ໃນຂນະທີ່ຂ້າພະເຈົ້າໄປປະກາດຂ່າວປະເສີດແລະເປັນພຍານຢູ່ໃນຄຸກ ມີພວກນັກໂທດມາລົມຂ້າພະເຈົ້າແລະເວົ້າໃຫ້ຂ້າພະເຈົ້າຟັງວ່າ ພວກເຂົາຮູ້ວ່າສິ່ງທີ່ພວກເຂົາໄດ້ກະທຳໄປນັ້ນເປັນສິ່ງທີ່ຜິດ ແຕ່ໂທດທີ່ພວກເຂົາໄດ້ຮັບນັ້ນໜັກຫລາຍ. ໂທດຂອງຄວາມບາບກໍເໝືອນກັນ ຜົນກັມທີ່ພວກເຮົາໄດ້ຮັບນັ້ນໜັກກວ່າທີ່ພວກເຮົາຈະຮັບໄດ້. ຖ້າຢາກໃຫ້ມີການສາມັກຄີທັມກັບພຣະເຈົ້າ ພວກເຮົາຈະຕ້ອງມີຜູ້ນຶ່ງທີ່ປາສຈາກຄວາມຜິດບາບເປັນຜູ້ແທນຂອງພວກເຮົາ. ເພື່ອເຂົ້າໄປຫາພຣະເຈົ້າທູນຂໍທາງອອກຕໍ່ພຣະອົງ ຫລືໄປໃຊ້ໜີ້ສິນຄວາມຜິດບາບຂອງພວກເຮົາຕາມເງື່ອນໄຂຂອງພຣະອົງ. ພຣະເຢຊູຊົງຖວາຍພຣະອົງເອງເປັນເຄື່ອງບູຊາໄຖ່ແທນຄວາມຜິດບາບຂອງພວກເຮົາ. ສະນັ້ນ ການກະທຳຂອງພຣະອົງໄດ້ສຳເຣັດຕາມຂໍ້ຄຳສັ່ງຂອງພຣະເຈົ້າອົງທ່ຽງທັມ. ມີແຕ່ພຣະອົງເທົ່ານັ້ນທີ່ສາມາດໃຊ້ໜີ້ສິນແທນຄວາມຜິດບາບຂອງພວກເຮົາ ແລະພຣະອົງຊົງກະທຳດ້ວຍຄວາມພໍໃຈ (ໃຫ້ເບິ່ງພຣະທັມ 1 ເປໂຕ 2:24) .

ໃນຣະດູບານໃໝ່ຂອງປີ 2004 ທີ່ຜ່ານມານີ້ ມີພາບພະຍົນເຣື່ອງນຶ່ງໄດ້ສະແດງເຖິງຄວາມທຸກທໍຣະມານຂອງພຣະເຢຊູ (The Passion of the Christ) ພາບພະຍົນເຣື່ອງນີ້ມີຈຸດປະສົງໃຫ້ຜູ້ຊົມເຫັນພາບພົດລາຍລະອຽດໃນເມື່ອພຣະອົງຖືກຕີດ້ວຍແສ້ໜັງທີ່ປາຍຂອງມັນມັດດ້ວຍເຫລັກແລະກະດູກສັດ. ແຕ່ລະບາບທີ່ພຣະອົງຖືກຕີນັ້ນໜັງແລະຊີ້ນຂອງພຣະອົງຖືກເກາະອອກມາ ເລືອດອາບຕົວຂອງພຣະອົງ. ມົງກຸດໜາມແທງເຂົ້າໄປໃນຊີ້ນແລະໜັງທີ່ໜ້າຜາກແລະຫົວຂອງພຣະອົງ. ພຣະອົງຖືກພວກເຂົາຕີ ໜ້າຕາບວມຊ້ຳຈົນເບິ່ງບໍ່ອອກວ່າແມ່ນຄົນດຽວກັນ. ຕະປູຕອກໃສ່ຊີ້ນດິບໆຂອງຄົນທີ່ຍັງບໍ່ທັນໃຈຂາດ. ພຣະອົງລົ້ມຟຸບລົ້ມຟາຍ ໄມ້ກາງແຂນລົ້ມທັບພຣະອົງໜ້າຕາແລະຮ່າງກາຍຂອງພຣະອົງຖາກໄປກັບຫີນປູທາງ. ພຣະອົງຖືກທໍຣະມານຢ່າງແສນສາຫັດ. ຄວາມບາບທີ່ພວກເຮົາໄດ້ກະທຳໄປນັ້ນໄດ້ທໍຣະມານແລະທຳຮ້າຍພຣະອົງດ້ວຍຄວາມເຈັບປວດແສນທີ່ຈະບັນລະຍາຍໄດ້. ພວກເຮົາສົມຄວນໄດ້ຮັບຄວາມເຈັບປວດຢ່າງນັ້ນ ແຕ່ພຣະອົງຊົງຍອມຮັບແບກບາບຂອງພວກ ເຮົາດ້ວຍໃຈສມັກ. ເມື່ອເປັນດັ່ງນັ້ນພວກເຮົາຍັງຈະເຮັດບາບອີກຕໍ່ໄປບໍ່?

ກ່ອນພຣະເຢຊູສະເດັດເຂົ້າມາໃນໂລກນີ້ ພວກປະໂຣຫິດເຂົ້າໄປໃນສຳນັກສ້າງຂຶ້ນດ້ວຍມືຂອງມະນຸດ. ພວກເຂົານຳ ເລືອດແບ້ຫລືເລືອດງົວເຖິກ ເຂົ້າໄປຖວາຍເພື່ອຊຳຣະຮ່າງກາຍໃຫ້ສະອາດຂອງຜູ້ທີ່ເປັນມົນທິນຕາມກົດຂອງພຣະບັນຍັດ. ເຄື່ອງຖວາຍດັ່ງກ່າວບໍ່ໄດ້ເຮັດອັນໃດກັບການຊຳຣະພາຍໃນຂອງຈິດວິນຍານ. ຜົນຂອງຄວາມບາບໄດ້ລ້າງ

ຜ່ານຈິດວິນຍານຂອງພວກເຮົາ. ຕາບໃດພວກເຮົາບໍ່ໄດ້ຮັບການຊໍາຮະພາຍໃນເສັຽກ່ອນ ພວກເຮົາກໍຈະໄດ້ຮັບຄວາມທຸກລໍາບາກຍ້ອນຄວາມຮູ້ສຶກໃນຄວາມບາບຂອງພວກເຮົາ. ເມື່ອໄດ້ຮັບການຊໍາຮະລ້າງແລ້ວ ພວກເຮົາສາມາດເຂົ້າເຝົ້າພຣະເຈົ້າໂດຍຜ່ານທາງພຣະເຢຊູ.

ບັດນີ້ ພວກເຮົາມີເສຣີທີ່ ຫັນໄປຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່. ຍ້ອນການກະທໍາຂອງພຣະເຢຊູ ຊີວິດຂອງພວກເຮົາຈຶ່ງມີເປົ້າຫມາຍ. ໂປໂລໄດ້ເຕືອນພວກເຮົາວ່າ ພຣະເຈົ້າໄດ້ຊື້ພວກເຮົາດ້ວຍລາຄາສູງ "ເຫດສັນນັ້ນຈົ່ງຖວາຍພຣະກຽດຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ" (1 ໂກຣິນໂທ 6:20).

ເມື່ອພວກເຮົາຫາກກັບໃຈຈາກຄວາມຜິດບາບຂອງພວກເຮົາ ພວກເຮົາໄດ້ຮ້ອງຂໍໃຫ້ພຣະເຢຊູອະພັຍຄວາມຜິດບາບຂອງພວກເຮົາ ແລະໄວ້ວາງໃຈໃນພຣະອົງ ພວກເຮົາຍອມຮັບເຄື່ອງຖວາຍບູຊາຂອງພຣະອົງເຂົ້າມາໃນຊີວິດຂອງພວກເຮົາແລະມອບໃຫ້ພຣະໂລຫິດຂອງພຣະອົງຊໍາຮະພວກເຮົາໃຫ້ຂາວສະອາດ.

ພຣະຄັມພີໄດ້ກ່າວໄວ້ຢ່າງແຈ່ມແຈ້ງວ່າ "ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງຊໍາຮະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ (1 ໂຢຮັນ 1:9).

ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າພຣະເຢຊູຊົງເປັນມະຫາປະໂຣຫິດຂອງຂ້າພະເຈົ້າ?

- ພຣະເຢຊູຊົງຮັບຕໍາແຫນ່ງຂອງມະຫາປະໂຣຫິດດ້ວຍການຖວາຍພຣະອົງເອງ ເພື່ອເປັນເຄື່ອງບູຊາໄຖ່ບາບຂອງພວກເຮົາ.
- ພຣະເຈົ້າຊົງບັນດານໃຫ້ພຣະອົງຄືນພຣະຊົນແລະຮັບເອົາພຣະໂລຫິດຂອງພຣະອົງໃຫ້ເປັນເຄື່ອງໄຖ່ບາບຂອງພວກເຮົາ.
- ພຣະເຢຊູຊົງເປັນມະຫາປະໂຣຫິດຂອງທຸກຄົນທີ່ເຊື່ອໃນພຣະອົງ.
- ໃນຕໍາແຫນ່ງມະຫາປະໂຣຫິດ ພຣະອົງຊົງທູນຂໍຕໍ່ພຣະເຈົ້າແທນພວກເຮົາຢູ່ທຸກເວລາ.
- ພຣະເຢຊູຊົງເປັນມະຫາປະໂຣຫິດອົງດຽວເທົ່ານັ້ນທີ່ພຣະບິດາເຈົ້າຮັບຮູ້.

ເມື່ອລະນຶກເຖິງພຣະອົງຊົງໄດ້ກະທໍາເພື່ອພວກເຮົາ ພວກເຮົາຄວນຈະຂອບຄຸນພຣະອົງ ສັຣເສີນພຣະອົງແລະຖວາຍກຽດແກ່ພຣະອົງໃນທຸກສິ່ງທີ່ພວກເຮົາໄດ້ກະທໍາ.

(ອຸປຖັມໂດຍ ລຊບສ www.lsbf.org)